ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----=====000=====-----

Lao

ຄະນະກຳມະການຄຸ້ມຄອງຫຼັກຊັບ

Lao Securities Commission

ເລກທີ 013 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 26 MAY 2014

# ແຈ້ງການ

**ເຖິງ:** ລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງ.

**ເລື່ອງ:** ການປັບປ່ຽນ ລາຍຊື່ຄະນະກຳມະການຄຸ້ມຄອງຫຼັກຊັບ.

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມໜັງສືແຈ້ງລາຍຊື່ຈາກພາກສ່ວນທີ່ກ່ຽວຂ້ອງ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍແຈ້ງມາຍັງທ່ານຊາບວ່າ ໄດ້ມີການປັບປ່ຽນ ລາຍຊື່ຄະນະກຳມະການຄຸ້ມຄອງຫຼັກຊັບ ປະກອບດ້ວຍບັນດາທ່ານທີ່ມີລາຍຊື່ ລຸ່ມນີ້:

1. **ທ່ານ ດຣ. ລຽນ ທິແກ້ວ ລັດຖະມົນຕີວ່າການ ກະຊວງການເງິນ** ເປັນຮອງປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບຜູ້ທີ່ສອງ ແທນ ທ່ານ ພູເພັດ ຄຳພູນວົງ ທີ່ຖືກຍົກຍ້າຍໄປຮັບໜ້າທີ່ໃໝ່;
2. **ທ່ານ ສຽວສະຫວາດ ສະແຫວງສຶກສາ ລັດຖະມົນຕີຊ່ວຍວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ** ເປັນກຳມະການແທນ ທ່ານ ນາງ ເຂັມມະນີ ພົນເສນາ ທີ່ຖືກຍົກຍ້າຍໄປຮັບໜ້າທີ່ໃໝ່.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ ປະທານ

ສົມສະຫວາດ ເລັ່ງສະຫວັດ